ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

**<u>ກະຊວງໂຍທາທິການ ແລະ ຂົນສົ່ງ</u>**

**<u>ບົດບັນທຶກ</u>**

**<u>ກອງປະຊຸມ ໂຍທາທິການ ແລະ ຂົນສົ່ງ ທົ່ວປະເທດ ປີ 2010, ທີ່ສູນການຄ້າລາວໄອເຕັກ</u>**

**<u>ລະຫວ່າງ ວັນທີ 15-18 ມີນາ 2010</u>**

ກອງປະຊຸມໂຍທາທິການ ແລະ ຂົນສົ່ງ ທົ່ວປະເທດປີ 2010 ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 15 ເດືອນ ມີນາ 2010, ເວລາ 08:30 ໂມງ ຢູ່ທີ່ສູນການຄ້າລາວ ໄອເຕັກ, ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ, ກຳມະການສູນກາງພັກ, ເລຂາຄະນະພັກກະຊວງ, ລັດຖະມົນຕີວ່າການກະຊວງ ຍທຂ, ໂດຍເປັນກຽດເຂົ້າຮ່ວມ ຂອງທ່ານ ນາງ ບຸນເພັງ ມູນໂພໄຊ, ກຳມະການສູນກາງພັກ, ລັດຖະມົນຕີປະຈຳສຳນັກງານ ນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງແລະຄຸ້ມຄອງລັດຖະກອນ, ທ່ານລັດຖະມົນຕີຊ່ວຍວ່າການກະຊວງ ຍທຂ, ທ່ານຫົວໜ້າ ແລະ ຮອງຫົວໜ້າຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ອົງການ,ສະພາວິທະຍາສາດ- ເຕັກນິກ, ສູນຝຶກ,ບັນດາກອງວິຊາການ, ຫົວໜ້າພະແນກ ຍທຂ ບັນດາແຂວງ, ນະຄອນຫລວງ , ປະທານ ອພບ,ອພບຕ, ບັນດາຫົວໜ້າຫ້ອງການ ຍທຂ ເມືອງ ຕ່າງໆໃນທົ່ວປະເທດ, ນອກຈາກນັ້ນກອງປະຊຸມຍັງໄດ້ເປັນກຽດ ເຂົ້າຮ່ວມຂອງ ບັນດາທ່ານ ຕາງໜ້າຈາກ ຄະນະເລຂາທິການລັດຖະບານ, ບັນດາກະຊວງ, ທະບວງຕ່າງໆ ຈຳນວນນຶ່ງ ເຊັ່ນ: ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ,ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ບັນດາບໍລິສັດ,ລັດວິສາຫະກິດ ແລະ ພະນັກງານອາວຸໂສບຳນານເຂົ້າຮ່ວມ.

ກອງປະຊຸມໄດ້ເລີ່ມຕົ້ນໂດຍການຂຶ້ນກ່າວສະເໜີຈຸດປະສົງ ແລະ ສະເໜີແຂກທີ່ເຂົ້າຮ່ວມກອງປະຊຸມຂອງ ທ່ານຫົວໜ້າຫ້ອງການກະຊວງ, ຈາກນັ້ນທ່ານລັດຖະມົນຕີຊ່ວຍວ່າການ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ, ໃນການດຳເນີນກອງປະຊຸມໄດ້ຮັບຟັງການລາຍງານຫຍໍ້ ສະພາບການຈັດຕັ້ງປະຕິບັດແຜນການສົກປີ 2008-2009 ,ທິດທາງແຜນການສົກປີ 2009-2010 , ບົດສະຫລຸບການປະຕິບັດແຜນການ 5 ປີຜ່ານມາ, ຮ່າງແຜນຍຸດທະສາດ ການພັດທະນາຂະແໜງຂົວທາງ ໄລຍະ 2011-2020 , ຜົນການກວດກາດ້ານການເງິນ ແລະ ເຕັກນິກຂະແໜງ ຍທຂ, ສະເໜີທິດໃນການແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງແລະ ທ້ອງຖິ່ນ ແລະ ລະຫວ່າງກົມວິຊາການກັບພະແນກ ຍທຂ ແຂວງ ອພບ,ອພບຕ ກັບຫ້ອງການ ຍທຂ ເມືອງ. ຈາກນັ້ນ ກໍໄດ້ຕັ້ງຂໍ້ເຈາະຈົ້ມເພື່ອໃຫ້ກອງປະຊຸມໄດ້ຄົ້ນຄວ້າ ແລະ ປະກອບຄຳຄິດ ຄຳເຫັນ , ພິເສດໃນມື້ທີ 3 ຂອງກອງປະຊຸມຄື ວັນທີ 17/04/2010 ເວລາ 10,00 ໂມງ ກອງປະຊຸມ ໄດ້ຮັບກຽດຢ່າງສູງ ຕ້ອນຮັບທ່ານ ບົວສອນ ບຸບຜາວັນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດ ຖະມົນຕີ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ກຽດໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ (ບົດໂອ້ລົມຂອງທ່ານນາຍົກໄດ້ຄັດຕິດ ມາພ້ອມນີ້) ຜ່ານການດຳເນີນກອງປະຊຸມ, ການປະກອບຄຳເຫັນຢ່າງກວ້າງຂວາງ ແລະ ກົງໄປກົງມາຂອງບັນດາຜູ້ແທນເປັນເວລາ 4 ມື້ ພວກເຮົາໄດ້ເອກະພາບກັນບາງເນື້ອໃນຂ້າງລຸ່ມນີ້:

I. ກ່ຽວກັບບົດສະຫລຸບການຈັດຕັ້ງປະຕິບັດແຜນການສົກປີ 2008-2009 ແລະ ທິດທາງແຜນການສົກປີ 2009-2010 ແລະ ຮ່າງແຜນຍຸດທະສາດການເຊື່ອມຕໍ່ດ້ານທາງຫລວງໄລຍະ 2011-2020 ໃນນັ້ນມີແຜນພັດທະນາ ຂົວທາງໄລຍະ 2011-2015.

ໂດຍພື້ນຖານແລ້ວກອງປະຊຸມແມ່ນເຫັນດີເປັນເອກກະພາບ ຕໍ່ບົດສະຫລຸບປະຈຳສົກປີ 2008-2009 ແລະ ທິດທາງແຜນການສົກປີ 2009-2010, ບົດສະຫລຸບການປະຕິບັດແຜນການ 5 ປີຜ່ານມາ ແລະ ຮ່າງຍຸດທະສາດການເຊື່ອມຕໍ່ດ້ານທາງຫລວງໄລຍະ 2011-2020 ແລະ ແຜນພັດທະນາຂົວທາງໄລຍະ 2011-2015 ທີ່ທ່ານຫົວໜ້າກົມແຜນການ ແລະ ການຮ່ວມມືໄດ້ສະເໜີຕໍ່ກອງປະຊຸມ, ນອກນັ້ນ,ກອງປະຊຸມຍັງໄດ້ສະເໜີໃຫ້ຂະແໜງການອື່ນໆຮີບຮ້ອນສ້າງແຜນຍຸດທະສາດຂອງຕົນເຊັ່ນ: ໂຍທາທິການທາງນ້ຳ,ການບິນພົນລະເຮືອນ, ທາງລົດໄຟ, ຂົນສົ່ງ ,ເຄຫາຜັງເມືອງ ນ້ຳປະປາ ແລະ ອື່ນໆ.. ພ້ອມດຽວກັນນັ້ນ ກອງປະຊຸມຍັງໄດ້ເປັນເອກກະພາບກ່ຽວກັບການແບ່ງຂັ້ນຄຸ້ມຄອງ ໃນການວາງແຜນ ພັດທະນາຂະແໜງການດັ່ງຕໍ່ລົງໄປນີ້:

1. ບັນດາກົມຂະແໜງການ ຮັບຜິດຊອບຕໍ່ການສ້າງແຜນງານ ການພັດທະນາ ບັນດາໂຄງການທີ່ມີຄວາມໝາຍສຳຄັນລະດັບຊາດໃນຂະແໜງການຂອງຕົນ.
2. ພະແນກ ຍທຂ ບັນດາແຂວງ, ນະຄອນຫລວງຮັບຜິດຊອບຕໍ່ການສ້າງແຜນພັດທະນາ ບັນດາໂຄງການລະດັບແຂວງ ຂອງຕົນ.
3. ຫ້ອງການ ຍທຂ ເມືອງ ຮັບຜິດຊອບຕໍ່ການສ້າງແຜນພັດທະນາ ບັນດາໂຄງການລະດັບເມືອງຂອງຕົນ.
4. ມອບໃຫ້ກົມແຜນການ ແລະ ການຮ່ວມມື, ບັນດາກົມຂະແໜງການມີແຜນດຳເນີນງານລະອຽດໃນການລົງໄປຊ່ວຍ ພະແນກ ຍທຂ ແຂວງ, ນະຄອນຫລວງ ແລະ ຫ້ອງການ ຍທຂ ບັນດາເມືອງໃຫ້ສຳເລັດ.

## II. ກ່ຽວກັບວຽກງານການກວດດ້ານການເງິນ ແລະ ດ້ານເຕັກນິກຂະແໜງ ຍທຂ.

- ເພື່ອເພີ່ມທະວີການຄຸ້ມຄອງລັດໃຫ້ນັບມື້ຮັດກຸມ ຖືກຕ້ອງຕາມລະບຽບກົດໝາຍ ແລະ ໂປ່ງໃສ ສາມາດກວດສອບໄດ້,ວຽກງານກວດກາແມ່ນມີຄວາມຈຳເປັນພາວະວິໄສທີ່ຕ້ອງປະຕິບັດໄປຄຽງຄູ່ກັບການຈັດຕັ້ງ ປະຕິບັດວຽກງານຕ່າງໆໃນແຕ່ລະຂັ້ນ, ໃນນັ້ນການກວດສອບພາຍໃນເປັນປະຈຳປົກກະຕິ ແມ່ນມີຄວາມຈຳເປັນທີ່ຕ້ອງຈັດຕັ້ງປະຕິບັດຢູ່ໃນກົງຈັກຄຸ້ມຄອງລັດຂັ້ນຕ່າງໆ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍສະເພາະແມ່ນຂັ້ນກົມ, ພະແນກ ຍທຂແຂວງ ແລະ ຫ້ອງການ ຍທຂ ເມືອງ.
- ກອງປະຊຸມເຫັນດີຮັບຮອງເອົາຜົນການກວດກາດ້ານເຕັກນິກ ແລະ ດ້ານການເງິນທີ່ສະເໜີໂດຍຫົວໜ້າກົມກວດກາ ແລະ ໃຫ້ບັນດາກົມອ້ອມຂ້າງ,ພະແນກ ຍທຂ ແຂວງ, ຫ້ອງການເມືອງ ນຳເອົາຄຳແນະນຳທີ່ໄດ້ລະບຸໃນບົດກວດກາດັ່ງກ່າວໄປຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍ, ມອບໃຫ້ຫົວໜ້າກົມກວດກາ ສັງລວມເນື້ອໃນບົດກວດກາການເງິນ, ເຕັກນິກ ທີ່ພົວພັນກັບພາກສ່ວນກ່ຽວຂ້ອງເພື່ອນຳສົ່ງໃຫ້ພາກສ່ວນດັ່ງກ່າວແກ້ໄຂ.

## II. ການແບ່ງຂັ້ນຄຸ້ມຄອງລະຫວ່າງບັນດາກົມຂະແໜງການກັບພະແນກ ຍທຂ ແຂວງ ແລະ ລະຫວ່າງພະແນກ ຍທຂ ແຂວງກັບຫ້ອງການ ຍທຂ ເມືອງ ແລະ ການແບ່ງຄວາມຮັບຜິດຊອບ ລະຫວ່າງຂະແໜງ ຍທຂ ແລະ ອພບ/ອພບຕ.

- ກອງປະຊຸມເຫັນດີເປັນເອກະພາບໃນການແບ່ງຂັ້ນຄຸ້ມຄອງທີ່ສະເໜີໂດຍກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານປະຕິບັດຕາມພາລະບົດບາດຂອງແຕ່ລະຂັ້ນທີ່ໄດ້ກຳນົດໄວ້ຢ່າງຈະແຈ້ງແລ້ວ,ທັງນີ້ກໍ່ເພື່ອສ້າງຄວາມເຂັ້ມແຂງໃຫ້ຫ້ອງການ ຍທຂ ເມືອງ,ໂດຍການຫັນວຽກ, ຫັນຄົນ ແລະ ຫັນງົບປະມານລົງສູ່ເມືອງ, ມອບຄວາມ ຮັບຜິດຊອບໃຫ້ ຍທຂ ເມືອງໃຫ້ຫລາຍ ຂຶ້ນເປັນຕົ້ນແມ່ນການຕິດຕາມຄຸ້ມຄອງບັນດາໂຄງການຕ່າງໆ , ການຈັດຊື້ຈັດຈ້າງເອົາຜູ້ຮັບເໝົາໂຄງການ ລວມທັງການຄຸ້ມຄອງກິດຈະການໂຄງລ່າງໃນພື້ນທີ່ຂອງເມືອງ.
- ສຳລັບການແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງ ຍທຂ ກັບ ແລະ ອພບ/ອພບຕ, ໃນກອງປະຊຸມໄດ້ມີຄວາມເຫັນຫລາກຫລາຍກ່ຽວກັບໃນການຮວມເຂົ້າກັນ ຫລື ຮັກສາໄວ້ຄືເກົ່າ, ແຕ່ສັງລວມກອງປະຊຸມໄດ້ເຫັນດີໃຫ້ເອົາວຽກ ຍທຂ ຈາກ ອພບ/ອພບຕ ໃນເມືອງໃດທີ່ມີທິດຈະຫັນເປັນເທດສະບານໃຫ້ຫ້ອງການ ຍທຂ

ເມືອງເປັນຜູ້ຮັບຜິດຊອບ, ແຕ່ພາຍຫລັງທັນເປັນເທດສະບານແລ້ວຈຶ່ງມອບໃຫ້ອົງການທີ່ຈັດຕັ້ງຂຶ້ນໃໝ່ນັ້ນເປັນຜູ້ຮັບຜິດຊອບອົງການດຽວ, ສຳລັບຕົວເມືອງໃດທີ່ບໍ່ເປັນເທດສະບານ ແມ່ນມອບໃຫ້ ຫ້ອງການ ຍທຂ ເມືອງຮັບຜິດຊອບເລີຍ, ກະຊວງ ຍທຂ ຈະນຳສະເໜີ ບັນຫາ ນີ້ຕໍ່ລັດຖະບານເພື່ອຕົກລົງ.

IV. ດ້ານນິຕິກຳ

- ລະບຽບກົດໝາຍແມ່ນເຄື່ອງມືຄຸ້ມຄອງລັດ, ຜ່ານມາຂະແໜງ ຍທຂ ໄດ້ຄົ້ນຄວ້າ ແລະ ອອກກົດໝາຍໄດ້ຫລາຍສະບັບ,ແຕ່ເຫັນວ່າການຈັດຕັ້ງປະຕິບັດ,ການເຜີຍແຜ່ແມ່ນຍັງບໍ່ທັນໄດ້ດີ, ບາງກົດໝາຍແມ່ນໄດ້ນຳໃຊ້ມາດົນແລ້ວເຫັນວ່າເນື້ອໃນຈຳນວນນຶ່ງບໍ່ແທດເໝາະກັບສະພາບຕົວຈິງຄວນມີການປັບປຸງ.
- ມອບໃຫ້ບັນດາກົມທີ່ກ່ຽວຂ້ອງຄົ້ນຄວ້າລະອຽດບັນດາໜ້າວຽກ ທີ່ຈະມອບໃຫ້ພະແນກ ຍທຂ ແຂວງ ແລະ ຫ້ອງການ ຍທຂ ເມືອງເປັນຜູ້ຮັບຜິດຊອບ, ພ້ອມທັງ ສ້າງຄູ່ມືແນະນຳການປະຕິບັດວຽກງານຂອງຫ້ອງ ການ ຍທຂເມືອງເພື່ອຄວາມເປັນເອກະພາບ.

V. ຂະແໜງການ ຂົວທາງ.

- ການຮັກສາເຂດສະຫງວນຂອງທາງຫລວງຄວນມີວິທີແກ້ໄຂດ່ວນ,ໂດຍສະເພາະຢູ່ເຂດທີ່ມີການພັດທະນາໄວຄວນມີນິຕິກຳຮອງຮັບແລະມີງົບປະມານເພື່ອຈັດຕັ້ງປະຕິບັດວຽກດັ່ງກ່າວນີ້.
- ກອງປະຊຸມເຫັນດີຈະນຳສະເໜີຕໍ່ລັດຖະບານກ່ຽວກັບການແກ້ໄຂງົບປະມານຊຳລະໜີ້ສິນຂອງໄພພິບັດສົກປີ 07-08 ແລະ 08-09 ຊຶ່ງຫລາຍແຂວງແມ່ນຍັງຄ້າງຄາຫລາຍ.
- ກອງປະຊຸມສະໜັບສະໜູນຮູບແບບການກໍ່ສ້າງທາງທີ່ ລັດ ແລະ ປະຊາຊົນພ້ອມກັນເຮັດ, ແຕ່ເນື່ອງຈາກງົບປະມານໄດ້ຮັບອະນຸມັດມີຈຳນວນຈຳກັດຈະໄດ້ຈັດສັນໃຫ້ເປັນແຕ່ລະເມືອງໄປຕາມບູລິມະສິດ ແລະອັດຕາສ່ວນການປະກອບສ່ວນ.

VI. ຂະແໜງການຂົນສົ່ງ.

- ເອົາໃຈໃສ່ປັບປຸງລະບຽບການ ແລະ ການຄຸ້ມຄອງການຂົນສົ່ງໂດຍສານທົ່ວໄປ ແລະ ຂົນສົ່ງນັກທ່ອງທ່ຽວໃຫ້ຮັດກຸມ ແລະ ເປັນລະບຽບຮຽບຮ້ອຍກວ່າເກົ່າ.
- ໃຫ້ມີການຄົ້ນຄວ້ານຳໃຊ້ການຂົນສົ່ງໂດຍສານມວນຊົນໃນຕົວເມືອງດ້ວຍລົດເມໄຟຟ້າໂດຍສະເພາະໃນ ຕົວເມືອງໃຫ່ຍປະຫຍັດ,ປອດໄພ ແລະ ຫລຸດຜ່ອນມົນລະພິດ.
- ເຫັນດີມອບວຽກຄຸ້ມຄອງພາຫານະແລະ ການຂັບຂີ່ຈຳນວນນຶ່ງເຊັ່ນ:ລົດຈັກ,ລົດໄຖນາເດີນຕາມ,ລົດໂດຍສານ ຂະໜາດ 10 ບ່ອນນັ່ງລົງມາ ໃຫ້ແກ່ຫ້ອງການ ຍທຂ ເມືອງເປັນຜູ້ຄຸ້ມຄອງ.

VII. ຂະແໜງການໂຍທາທິການ ທາງນ້ຳ.

- ເພີ່ມທະວີການລົງທຶນໃສ່ວຽກກໍ່ສ້າງປ້ອງກັນຕະຝັ່ງເຈື່ອນຕາມແມ່ນ້ຳຂອງ ແລະນ້ຳເຫືອງ ໂດຍສະເພາະແມ່ນຊ່ວງທີ່ເປັນຊາຍແດນລະຫວ່າງປະເທດ.
- ເພີ່ມທະວີເອົາໃຈໃສ່ຄຸ້ມຄອງການຂຸດຄົ້ນຫີນແຮ່,ຊາຍຕາມລຳນ້ຳຂອງ ຊຶ່ງປະຈຸບັນເຫັນວ່າຍັງມີການຂຸດຄົ້ນຊະຊາຍແລະ ຍັງມີຄວາມສັບສົນໃນການຄຸ້ມຄອງລະຫວ່າງຂະແໜງ ຍທຂ ແລະ ຂະແໜງ ພະລັງງານ ແລະ ບໍ່ແຮ່.
- ເຫັນດີມອບວຽກການຄຸ້ມຄອງເຮືອຈັກທີ່ມີຂະໜາດແຮງມ້າເໝາະສົມ ໃຫ້ແກ່ຫ້ອງການ ຍທຂ ເມືອງເປັນຜູ້ຄຸ້ມຄອງ, ມອບໃຫ້ກົມໂຍທາທິການທາງນ້ຳຄົ້ນຄວ້າອອກແຈ້ງການລະອຽດ.

## VIII. ຂະແໜງການ ເຄຫາຜັງ ເມືອງ ນ້ຳປະປາ

- ເພີ່ມທະວີການສ້າງຜັງບ້ານ/ກຸ່ມບ້ານແມ່ນມີຄວາມສຳຄັນ ແລະ ຈຳເປັນເພື່ອໃຫ້ເປັນທີ່ແໜງຂອງການເກີດເປັນຕົວເມືອງນ້ອຍໃນຊົນນະບົດ. ດັ່ງນັ້ນ, ກອງປະຊຸມເຫັນດີຕ້ອງໄດ້ເອົາໃຈໃສ່ເພີ່ມການລົງທຶນໃນການອອກແບບຜັງບ້ານ, ກຸ່ມບ້ານ ແລະ ເມືອງທີ່ຍັງບໍ່ທັນມີຜັງລວມທັງການຕັດແລວຕາຜ້າ ແລະ ຮັກສາເຂດສະຫງວນຂອງທາງໄວ້.
- ອອກແຮງຂົນຂວາຍທຶນຮອນທັງພາຍໃນແລະຕ່າງປະເທດເພື່ອມາກໍ່ສ້າງລະບົບນ້ຳປະປາໃຫ້ແກ່ບັນດາເມືອງຕ່າງໆ ທີ່ຍັງບໍ່ທັນມີ ໂດຍສະເພາະແມ່ນບັນດາເມືອງທຸກຍາກທີ່ເປັນບູລິມະສິດຂອງລັດຖະບານ.
- ເພີ່ມທະວີເອົາໃຈໃສ່ ວຽກງານຄຸ້ມຄອງການປຸກສ້າງໃຫ້ໄປຕາມຜັງທີ່ໄດ້ກຳນົດ ເພື່ອສ້າງໃຫ້ເປັນຕົວເມືອງທີ່ເປັນລະບຽບ, ສວຍງາມແຕ່ທົວທີໂລດ.
- ກະຊວງ ຍທຂ ຈະສະເໜີລັດຖະບານພິຈາລະນາ ນະໂຍບາຍຜ່ອນຜັນທາງດ້ານການເງິນ, ນະໂຍບາຍດ້ານພາສີນຳເຂົ້າພາຫານະ, ອຸປະກອນຮັບໃຊ້ ເພື່ອຊ່ວຍໃຫ້ອົງການຄຸ້ມຄອງ ແລະ ບໍລິຫານຕົວເມືອງ ໃຫ້ສາມາດປະຕິບັດໜ້າທີ່ຂອງຕົນໄດ້ຢ່າງມີຄວາມຍືນຍົງ.
- ເພີ່ມທະວີ ແລະ ເອົາໃຈໃສ່ວຽກງານຄຸ້ມຄອງການລະບາຍນ້ຳເສັຍຈາກຕົວເມືອງ, ໂດຍສະເພາະແມ່ນ ນ້ຳເສັຍຈາກໂຮງໝໍ, ໂຮງງານຕ່າງໆ ທີ່ເຈືອປົນສານເຄມີຄວນໄດ້ບຳບັດກ່ອນປ່ອຍລົງ ສູ່ແຫລ່ງນ້ຳທຳມະຊາດ.
- ເລັ່ງລັດການຈັດຕັ້ງປະຕິບັດໂຄງການ ພັດທະນານ້ຳປະປາ ແລະ ສຸກຂະພິບານທີ່ໄດ້ເຊັນສັນຍາແລ້ວໃຫ້ສຳເລັດຕາມແຜນການ.

## IX. ວຽກແຜນການ ການຮ່ວມມື.

- ສ້າງແຜນຍຸດທະສາດລວມການພັດທະນາຂະແໜງ ຍທຂ ໃຫ້ສຳເລັດ.
- ບັນດາກົມວິຊາການ ແລະ ພະແນກ ຍທຂ ບັນດາແຂວງ ຮີບຮ້ອນສ້າງແຜນພັດທະນາໄລຍະ 2011-2015 ຂອງຕົນໃຫ້ສຳເລັດໂດຍໄວ.
- ເລັ່ງລັດການຈັດຕັ້ງປະຕິບັດໂຄງການທີ່ມີຢູ່ແລ້ວໃຫ້ສຳເລັດຕາມແຜນການ, ຮັບປະກັນຄຸນນະພາບ, ເວລາ ແລະ ມີຄວາມໂປ່ງໃສ, ບັນຫານີ້ຖືເປັນຂໍ້ແຂ່ງຂັນລວມທົ່ວຂະແໜງການ.

## X. ວຽກງານຈັດຕັ້ງ ພະນັກງານ.

- ກອງປະຊຸມຮັບຮູ້ການສະເໜີຂອງບັນດາຫ້ອງການ ຍທຂ ເມືອງ ກ່ຽວກັບການຂາດເຂີນບຸກຄະລາກອນ, ອຸບປະກອນ, ພາຫານະ ຮັບໃຊ້ ແລະ ງົບປະມານບໍລິຫານ, ຕໍ່ການສະເໜີດັ່ງກ່າວນີ້ ທາງກະຊວງເຫັນດີພິຈາລະນາທຶນຝຶກອົບຮົມເພື່ອຍົກລະດັບດ້ານຕ່າງໆໃຫ້ແກ່ພະນັກຫ້ອງການ ຍທຂ ເມືອງທັງໄລຍະສັ້ນ ແລະ ຍົກລະດັບໄລຍະຍາວ.
- ຄົ້ນຄວ້າເພື່ອຕອບສະໜອງໃຫ້ໄດ້ຂັ້ນພື້ນຖານ ອຸບປະກອນ , ພາຫານະຮັບໃຊ້ທີ່ຈຳເປັນເພື່ອອຳນວຍ ຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງຫ້ອງການ ຍທຂ ເມືອງ.
- ນຳສະເໜີພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າເພີ່ມໂກຕາລັດຖະກອນເພື່ອສະໜອງໃຫ້ແກ່ບັນດາຫ້ອງການ ຍທຂ ເມືອງ.

## XI. ຂໍ້ແຂ່ງຂັນຂອງຂະແໜງ ຍທຂ.

- ກອງປະຊຸມເຫັນດີຮັບຮອງເອົາຂະບວນການເປີດການແຂ່ງຂັນໃນຂະແໜງ ຍທຂ ທີ່ສະຫະພັນກຳມະບານກະຊວງ ຍທຂ ໄດ້ວາງອອກ ຊຶ່ງໄດ້ກຳນົດຈຸດປະສົງ ຄາດໝາຍ ແລະ ຫລັກການພື້ນຖານໃນການຈັດຕັ້ງປະ

ຕິບັດໂດຍມອບໃຫ້ແຕ່ລະພາກສ່ວນ ທັງສູນກາງ ແລະ ທ້ອງຖິ່ນນຳໄປຈັດຕັ້ງຜັນຂະຫຍາຍຢ່າງເປັນຂະບວນຟົດຟື້ນຕາມສະພາບຕົວຈິງຂອງແຕ່ລະພາກສ່ວນ.

- ເພີ່ມທະວີ ແລະ ເອົາໃຈໃສ່ເປັນພິເສດການບໍລິການ ສັງຄົມໃຫ້ດີ,ວ່ອງໄວ,ປອດໄພ ເພື່ອຫລຸດຜ່ອນທາງສຽງຈົ່ມວ່າຂອງສັງຄົມຕໍ່ຂະແໜງ ຍທຂ ພວກເຮົາ.

ກອງປະຊຸມຂໍສະແດງຄວາມຂອບອົກຂອບໃຈຕໍ່ທ່ານນາຍົກລັດຖະມົນຕີ ທີ່ໄດ້ໃຫ້ກຽດຊີ້ນຳຢ່າງມີຄຸນຄ່າສູງຕໍ່ກອງປະຊຸມ, ຂໍຂອບໃຈບັນດາທ່ານຜູ້ແທນກອງປະຊຸມທີ່ໄດ້ສະລະເວລາອັນມີຄ່າຂອງຕົນເຂົ້າມາຮ່ວມກອງປະຊຸມ ຍທຂ ໃນຄັ້ງນີ້, ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ບັນດາພາກສ່ວນຕ່າງໆທີ່ໄດ້ໃຫ້ການອຸບປະຖຳ ສະໜັບສະໜູນແກ່ກອງປະຊຸມ, ພິເສດແມ່ນສູນການຄ້າລາວ ໄອເຕັກທີ່ໄດ້ເອື້ອອຳນວຍຄວາມສະດວກທາງດ້ານສະຖານທີ່ ແລະ ບັນດາບໍລິສັດຂົນສົ່ງໂດຍສານທີ່ໄດ້ສະໜັບສະໜູນລົດເມມາບໍລິການຮັບໃຊ້ກອງປະຊຸມ, ຂໍສະແດງຄວາມຂອບໃຈມາຍັງບັນດາອະນຸກຳມະການຝ່າຍ ຕ່າງໆທີ່ໄດ້ປະຕິບັດ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ແລະ ເຮັດໃຫ້ກອງປະຊຸມຄັ້ງນີ້ສຳເລັດຜົນເປັນຢ່າງດີ.

ດັ່ງນັ້ນ, ຈຶ່ງໄດ້ມີບົດບັນທຶກກອງປະຊຸມສະບັບນີ້ໄວ້ເພື່ອໃຫ້ຂະແໜງການ ຍທຂ ຢູ່ຂັ້ນສູນກາງ ແລະ ທອ້ງຖິ່ນນຳໄປເປັນທິດນຳ ແລະ ບ່ອນອີງໃຫ້ແກ່ການຜັນຂະຫຍາຍຈັດຕັ້ງປະຕິບັດ ແຜນພັດທະນາດ້ານ ຍທຂ ໃຫ້ປະສິບຜົນສຳເລັດຕາມຄາດໝາຍເປັນຢ່າງດີ.

ລັດຖະມົນຕີວ່າການ
ປະທານກອງປະຊຸມ

ສົມມາດ ພົລເສນາ

ຫົວໜ້າກົມແຜນການ-ຮ່ວມມື
ຫົວໜ້າກອງເລຂາກອງປະຊຸມ

ມັດ ສູນມາລາ